ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ ເລກທີ 1282/ອຊ

ອຸດົມໄຊ, ວັນທີ 12.9. 2024

# ຂໍ້ຕົກລົງ
## ວ່າດ້ວຍ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ແຂວງອຸດົມໄຊ

- **ອີງຕາມ** ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ (ສະບັບປັບປຸງ), ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- **ອີງຕາມ** ກົດໝາຍ ວ່າດ້ວຍເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- **ອີງຕາມ** ມະຕິກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ສະບັບເລກທີ 901/ສພຂ.ອຊ, ລົງວັນທີ 19 ກໍລະກົດ 2024.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເພື່ອເຮັດໃຫ້ການດຳເນີນທຸລະກິດ ມີຄວາມເປັນເອກະພາບ, ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງ ແລະ ຍຸຕິທຳ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາ ເສດຖະກິດ-ສັງຄົມ ຂອງແຂວງ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຂຶ້ນເທື່ອລະກ້າວ.

**ມາດຕາ 2 ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນການໃຫ້ບໍລິການນຳເຂົ້າ, ຈຳໜ່າຍ, ບໍລິການທີ່ປຶກສາ, ຝຶກອົບຮົມ, ບໍລິການຄວາມປອດໄພ, ສ້າງ ແລະ ບໍລິການຊອບແວ, ບໍລິການຕິດຕັ້ງ ແລະ ສ້ອມແປງ, ບໍລິການອິນເຕີເນັດ ແລະ ບໍລິການອື່ນ ທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

**ມາດຕາ 3 ການອະທິບາຍສັບ**

ຄຳສັບ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫຼື ໄອຊີທີ** ໝາຍເຖິງ ເຕັກໂນໂລຊີ ທີ່ຮັບໃຊ້ໃນການສ້າງ ຂໍ້ມູນ ຂ່າວສານ ເປັນລະບົບເອເລັກໂຕຣນິກ, ການຄຳນວນ, ການຈັດລຽງລຳດັບ, ການເກັບຮັກສາ ແລະ ການແລກປ່ຽນ ຂໍ້ມູນ ຂ່າວສານ ຜ່ານເຄືອຂ່າຍການສື່ສານ ເປັນຕົ້ນ ຄອມພິວເຕີ, ໂທລະສັບ, ອຸປະກອນສື່ສານ, ອຸປະກອນກະຈາຍສຽງ, ໂທລະພາບ, ເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກອື່ນ ລວມທັງການບໍລິການຕ່າງໆ ທີ່ກ່ຽວຂ້ອງ;

2. **ຜູ້ດຳເນີນທຸລະກິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກກະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນການໃຫ້ບໍລິການ ຫຼື ດຳເນີນທຸລະກິດ ທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. **ການບໍລິການນຳເຂົ້າອຸປະກອນໄອຊີທີ** ໝາຍເຖິງ ການນຳເອົາອຸປະກອນໄອຊີທີຈາກຕ່າງປະເທດເຂົ້າມາພາຍໃນປະເທດ ເພື່ອນຳໃຊ້ ຫຼື ສົ່ງມອບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງພາຍໃນ ສປປ ລາວ;

4. **ການບໍລິການຈຳໜ່າຍອຸປະກອນໄອຊີທີ** ໝາຍເຖິງ ການນຳເອົາອຸປະກອນໄອຊີທີ ອອກຂາຍສົ່ງ ຫຼື ຂາຍຍ່ອຍ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ສປປ ລາວ;

5. **ການບໍລິການຕິດຕັ້ງດ້ານໄອຊີທີ** ໝາຍເຖິງ ການນຳເອົາອຸປະກອນໄອຊີທີ ຫຼື ຊອບແວຕິດຕັ້ງໃນສະຖານທີ່ໃດໜຶ່ງ ຫຼື ໃນເຄື່ອງຄອມພິວເຕີໃດໜຶ່ງ ເພື່ອສາມາດນຳໃຊ້ຕາມຈຸດປະສົງສະເພາະ ເປັນຕົ້ນ ການຕິດຕັ້ງເສົາສັນຍານ, ລະບົບເຊີເວີ, ລະບົບເຄືອຂ່າຍອິນເຕີເນັດ, ລະບົບປະຕິບັດການຄອມພິວເຕີ ຫຼື ເຄືອຂ່າຍກ້ອງວົງຈອນປິດ;

6. **ການບໍລິການສ້ອມແປງດ້ານໄອຊີທີ** ໝາຍເຖິງ ການບຳລຸງຮັກສາ, ສ້ອມແປງ ອຸປະກອນໄອຊີທີ ຫຼື ຊອບແວ ເປັນຕົ້ນ ການສ້ອມແປງ ເຄື່ອງຄອມພິວເຕີ, ລະບົບເຄືອຂ່າຍ ຫຼື ລະບົບເຊີເວີ ໃຫ້ພ້ອມໃຊ້ງານໄດ້ຕະຫຼອດເວລາ;

7. **ການບໍລິການທີ່ປຶກສາດ້ານໄອຊີທີ** ໝາຍເຖິງ ການເກັບກຳ, ວິເຄາະຂໍ້ມູນ ໃຫ້ຄຳປຶກສາ ຫຼື ໃຫ້ຄວາມຊ່ວຍເຫຼືອດ້ານໄອຊີທີຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

8. **ການບໍລິການຝຶກອົບຮົມດ້ານໄອຊີທີ** ໝາຍເຖິງ ການເປີດຫຼັກສູດການສິດສອນ ຫຼື ຝຶກອົບຮົມດ້ານໄອຊີທີໃນໄລຍະສັ້ນ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

9. **ການສ້າງ ແລະ ບໍລິການຊອບແວ** ໝາຍເຖິງ ການສ້າງ, ພັດທະນາ, ຈຳໜ່າຍ ແລະ ບໍລິການດ້ານຊອບແວ;

10. **ການບໍລິການອິນເຕີເນັດ** ໝາຍເຖິງ ຮູບແບບການບໍລິການໜຶ່ງ ຂອງການບໍລິການດ້ານໂທລະຄົມມະນາຄົມ ທີ່ສະໜອງການບໍລິການໃຫ້ແກ່ຜູ້ຊົມໃຊ້ ສາມາດເຂົ້າເຖິງອິນເຕີເນັດໄດ້ ດ້ວຍວິທີເຊື່ອມຕໍ່ແບບມີສາຍ ຫຼື ບໍ່ມີສາຍ;

11. **ການບໍລິການຄວາມປອດໄພດ້ານໄອຊີທີ** ໝາຍເຖິງ ການໃຫ້ບໍລິການດ້ານຄວາມປອດໄພ ຂອງເຄືອຂ່າຍຄອມພິວເຕີ, ລະບົບອຸປະກອນຮາດແວ, ຊອບແວ ແລະ ຂໍ້ມູນ ຂ່າວສານ;

12. **ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ** ໝາຍເຖິງ ບັນດາອຸປະກອນ ທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເປັນຕົ້ນ ຄອມພິວເຕີ, ແລບທ໋ອບ, ແທັບແລັດ, ສະມາດໂຟນ, ອຸປະກອນປະມວນຜົນ, ອຸປະກອນເກັບຂໍ້ມູນ, ອຸປະກອນເຄືອຂ່າຍ, ອຸປະກອນເຊື່ອມຕໍ່ອິນເຕີເນັດ ແລະ ອື່ນໆ;

13. **ຮາດແວ (Hardware)** ໝາຍເຖິງ ພາກສ່ວນ ຫຼື ອົງປະກອບຂອງຄອມພິວເຕີ ແລະ ອຸປະກອນເອເລັກໂຕຣນິກອື່ນ ເປັນຕົ້ນ ໜ່ວຍຄວາມຈຳ, ໜ້າຈໍ, ແປ້ນພິມ, ເຄື່ອງພິມ, ໂທລະສັບ, ໂທລະພາບ ແລະ ອຸປະກອນອື່ນ ທີ່ກ່ຽວຂ້ອງ;

14. **ຊອບແວ (Software)** ໝາຍເຖິງ ຊຸດຄຳສັ່ງ ຫຼື ໂປຣແກຣມ ທີ່ບັນຊາຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກອື່ນ ໃຫ້ປະຕິບັດງານສະເພາະໃດໜຶ່ງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ**

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການດຳເນີນທຸລະກິດ ບໍລິການ ແລະ ພັດທະນາ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກ, ໃຫ້ນະໂຍບາຍຕາມກົດໝາຍ ແລະ ລະບຽບການ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການຄົ້ນຄວ້າ, ປະດິດສ້າງ ແລະ ພັດທະນາ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ພ້ອມທັງ ສົ່ງເສີມ ການບໍລິການ ແລະ ການນຳໃຊ້ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 5 ຫຼັກການກ່ຽວກັບ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການພັດທະນາ ວຽກງານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແຕ່ລະໄລຍະ;
2. ຮັບປະກັນຄວາມລັບຂອງພັກ-ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມວ່ອງໄວ, ຄວາມໂປ່ງໃສ ແລະ ຍຸຕິທຳ;
4. ສະເໝີພາບຕໍ່ໜ້າກົດໝາຍ ແລະ ແຂ່ງຂັນຢ່າງເປັນທຳ ໃນການດຳເນີນທຸລະກິດ;
5. ຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ແຂວງອຸດົມໄຊ.

## ໝວດທີ 2
## ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 7 ເງື່ອນໄຂ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງໄດ້ຮັບອະນຸຍາດຈາກ ພະແນກການເຕັກໂນໂລຊີ ແລະ ການສື່ສານ ຊຶ່ງຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທຶນ, ສຳນັກງານ ຫຼື ສະຖານທີ່, ພາຫະນະຂົນສົ່ງ ແລະ ອຸປະກອນຮັບໃຊ້ ໃນການປະຕິບັດວຽກງານດ້ານຕ່າງໆ ຢ່າງພຽງພໍ ແລະ ເໝາະສົມ;
2. ມີບຸກຄະລາກອນ ທີ່ມີຄວາມຮູ້ ແລະ ມີປະສົບການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຈຳນວນທີ່ເໝາະສົມກັບຂະໜາດຂອງທຸລະກິດ;
3. ມີແຜນດຳເນີນທຸລະກິດຢ່າງຈະແຈ້ງ ແລະ ສາມາດປະຕິບັດໄດ້;
4. ມີບົດວິພາກເສດຖະກິດ-ເຕັກນິກ ຕາມແຕ່ລະປະເພດທີ່ໃຫ້ບໍລິການ;
5. ປະກອບເອກະສານ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 8 ປະເພດ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ**

ປະເພດ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ກຳນົດຢູ່ໃນຂໍ້ຕົກລົງສະບັບນີ້ ປະກອບ ມີ ດັ່ງນີ້:

1. ບໍລິການ ນຳເຂົ້າ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
2. ບໍລິການ ຈຳໜ່າຍ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ບໍລິການ ທີ່ປຶກສາ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
4. ບໍລິການ ຝຶກອົບຮົມ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
5. ບໍລິການ ຄວາມປອດໄພ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
6. ບໍລິການ ພັດທະນາ ແລະ ຕິດຕັ້ງ ຊອບແວ;
7. ບໍລິການ ຕິດຕັ້ງ, ສ້ອມແປງ, ບຳລຸງຮັກສາ ອຸປະກອນ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
8. ບໍລິການ ອິນເຕີເນັດ;
9. ບໍລິການອື່ນ ທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

**ມາດຕາ 9 ມາດຕະຖານເຕັກນິກ**

ມາດຕະຖານເຕັກນິກ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນມາດຕະຖານສາກົນ ທີ່ນຳໃຊ້ໃນການກວດກາ ແລະ ຢັ້ງຢືນ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຊຶ່ງຖືກຮັບຮອງ ໂດຍກະຊວງເຕັກໂນໂລຊີ ແລະ ການສື່ສານ.

ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ນຳເຂົ້າ, ຈຳໜ່າຍ ແລະ ໃຫ້ບໍລິການ ຕ້ອງຜ່ານ ການຢັ້ງຢືນ ແລະ ຮັບຮອງມາດຕະຖານເຕັກນິກ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ.

ມາດຕະຖານເຕັກນິກ ໃນການສ້າງ ແລະ ບໍລິການຊອບແວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ມາດຕະຖານການໃຫ້ບໍລິການ**

ຜູ້ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງຮັບປະກັນຄຸນນະພາບ ການບໍລິການໃຫ້ແກ່ຜູ້ໃຊ້ບໍລິການ ເພື່ອໃຫ້ສິດແກ່ຜູ້ໃຊ້ບໍລິການ ສາມາດຮຽກຮ້ອງ ໃຫ້ສ້ອມແປງ, ປ່ຽນແທນ ຫຼື ຍົກເລີກການບໍລິການດັ່ງກ່າວ ຕາມໄລຍະເວລາຮັບປະກັນ, ການຮັບປະກັນຄຸນນະພາບ ການໃຫ້ບໍລິການ ຕ້ອງມີເອກະສານເປັນລາຍລັກອັກສອນ.

**ມາດຕາ 11 ມາດຕະຖານສະຖານທີ່ໃຫ້ບໍລິການ**

ມາດຕະຖານສະຖານທີ່, ຕຶກ, ອາຄານ ຫຼື ເຄຫາສະຖານ ທີ່ໃຫ້ບໍລິການ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ພ້ອມທັງໄດ້ຮັບການອະນຸຍາດ ຫຼື ຢັ້ງຢືນ ຈາກຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ 3
## ການຂໍອະນຸຍາດ ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

**ມາດຕາ 12 ການຂໍອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ພາຍຫຼັງຂຶ້ນທະບຽນວິສາຫະກິດ ຈາກຂະແໜງການອຸດ ສາຫະກຳ ແລະ ການຄ້າ ໃຫ້ນຳເອົາໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ ຍື່ນຕໍ່ຂະແໜງການເຕັກໂນໂລ ຊີ ແລະ ການສື່ສານ ເພື່ອຂໍອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

ຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ມີຫຼາຍສາຂາ ຕ້ອງໄດ້ຂໍອະນຸຍາດ ຕາມຈຳນວນສາຂາທີ່ຕົນເອງໃຫ້ບໍລິການ.

ໃບອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີອາຍຸການນຳໃຊ້ ໜຶ່ງ ປີ.

**ມາດຕາ 13 ວິທີການຂໍອະນຸຍາດ**

ວິທີການຂໍອະນຸຍາດ ມີ ສອງ ວິທີ ດັ່ງນີ້:

1. ຍື່ນເອກະສານຂໍອະນຸຍາດ ຢູ່ທີ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ຫ້ອງການ ຫຼື

ໜ່ວຍງານເຕັກໂນໂລຊີ ແລະ ການສື່ສານ ເມືອງ;

2. ຍື່ນເອກະສານຂໍອະນຸຍາດ ດ້ວຍລະບົບອອກໃບອະນຸຍາດແບບເອເລັກໂຕຣນິກ ຫຼື TCAP ຜ່ານອິນເຕີເນັດ.

**ມາດຕາ 14 ເອກະສານຂໍອະນຸຍາດ**

ການຂໍອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງປະກອບເອກະສານ ຕາມແບບຟອມ ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ດັ່ງນີ້:

1. ໃບຄຳຮ້ອງ;
2. ຊີວະປະຫວັດ;
3. ຮູບສີ 3x4 ຈຳນວນ 2 ໃບ (ຮູບຖ່າຍພາຍໃນ 3 ເດືອນ);
4. ບັດປະຈຳຕົວ ຫຼື ໜັງສືຜ່ານແດນ;
5. ໃບຢັ້ງຢືນທີ່ຢູ່;
6. ໃບມອບສິດ (ກໍລະນີເຈົ້າຂອງທຸລະກິດມອບໃຫ້ຜູ້ຕາງໜ້າເປັນຜູ້ຍື່ນເອກະສານ);
7. ໃບຢັ້ງຢືນທີ່ຕັ້ງສຳນັກງານ;
8. ບົດວິພາກເສດຖະກິດ ແລະ ເຕັກນິກ;
9. ໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດການລົງທຶນ;
10. ໃບຢັ້ງຢືນ ຫຼື ໃບປະກາດ ວິຊາສະເພາະ ທີ່ກ່ຽວຂ້ອງກັບປະເພດ ການບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
11. ໃບຢັ້ງຢືນສະຖານະການເງິນ ຈາກທະນາຄານ ພາຍໃນ ສປປ ລາວ;
12. ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 15 ການຕໍ່ໃບອະນຸຍາດ**

ການຕໍ່ໃບອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕ້ອງດຳເນີນການ ກ່ອນວັນໃບອະນຸຍາດໝົດອາຍຸ ສາມສິບ ວັນ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ;
2. ໃບອະນຸຍາດສະບັບເກົ່າ (ຕົ້ນສະບັບ);
3. ໃບມອບສິດ (ກໍລະນີເຈົ້າຂອງທຸລະກິດມອບໃຫ້ຜູ້ຕາງໜ້າເປັນຜູ້ຍື່ນເອກະສານ);
4. ໃບທະບຽນວິສາຫະກິດ (ຖ້າມີການປ່ຽນແປງທະບຽນວິສາຫະກິດ);
5. ໃບຢັ້ງຢືນການເສຍອາກອນ;
6. ບົດສະຫຼຸບການເຄື່ອນໄຫວດຳເນີນທຸລະກິດ ປະຈຳປີ;
7. ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 16 ໄລຍະພິຈາລະນາໃບອະນຸຍາດ**

ການຄົ້ນຄວ້າ ພິຈາລະນາ ອອກໃບອະນຸຍາດໃໝ່ ຕ້ອງດຳເນີນການໃຫ້ສຳເລັດ ພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຂໍອະນຸຍາດ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ;

ການຄົ້ນຄວ້າພິຈາລະນາຕໍ່ໃບອະນຸຍາດ ຕ້ອງດຳເນີນການໃຫ້ສຳເລັດ ພາຍໃນກຳນົດເວລາ ຫ້າ ວັນ ລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຂໍອະນຸຍາດ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ;

ກໍລະນີ ເອກະສານຂໍອະນຸຍາດ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂ ໄດ້ຮັບອະນຸຍາດ ຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ.

**ມາດຕາ 17 ການມອບໂອນ ຫຼື ປ່ຽນແປງເນື້ອໃນໃບອະນຸຍາດ**

ໃນກໍລະນີ ຜູ້ໄດ້ຮັບອະນຸຍາດດໍາເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຫາກມີຈຸດປະສົງ ຢາກຈະມອບໂອນ ຫຼື ປ່ຽນແປງເນື້ອໃນໃບອະນຸຍາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໂດຍປະກອບເອກະສານຕາມແບບຟອມ ທີ່ໄດ້ກໍານົດໄວ້.

**ມາດຕາ 18 ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່າທໍານຽມ ແລະ ຄ່າບໍລິການ ອະນຸຍາດດໍາເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 4
## ສິດ ແລະ ພັນທະ

**ມາດຕາ 19 ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດ**

**ຜູ້ດໍາເນີນທຸລະກິດ ມີ ສິດ ດັ່ງນີ້:**

1. ສະເໜີ ຂໍຕໍ່, ປ່ຽນແປງ, ໂຈະ ຫຼື ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດ ຂອງຕົນ;
2. ດໍາເນີນທຸລະກິດ ຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
3. ໃຫ້ບໍລິການ ຕາມປະເພດບໍລິການ ທີ່ໄດ້ຮັບອະນຸຍາດ;
4. ປົກປ້ອງສິດ ແລະ ຜົນປະໂຫຍດ ໃນການດໍາເນີນທຸລະກິດຂອງຕົນ;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຜູ້ດໍາເນີນທຸລະກິດ ມີ ພັນທະ ດັ່ງນີ້:**

1. ໃຫ້ບໍລິການ ດ້ວຍຄຸນນະພາບ, ເປັນທໍາ ແລະ ລາຄາ ສົມເຫດສົມຜົນ;
2. ສະໜອງຂໍ້ມູນ ແລະ ໃຫ້ຄວາມຮ່ວມມື ຕໍ່ພະນັກງານ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
3. ປະຕິບັດ ການເສຍພັນທະ ໃຫ້ແກ່ລັດ ຕາມກົດໝາຍ ແລະ ລະບຽບການ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ**

**ຜູ້ໃຊ້ບໍລິການ ມີ ສິດ ດັ່ງນີ້:**

1. ເລືອກ ແລະ ຕັດສິນໃຈ ຊື້ສິນຄ້າ ຫຼື ໃຊ້ບໍລິການ ຕາມຄວາມຕ້ອງການ;
2. ຮູ້ຂໍ້ມູນຂ່າວສານ ກ່ຽວກັບສິນຄ້າ ຫຼື ການບໍລິການ ທີ່ຊັດເຈນ ແລະ ຢ່າງຖືກຕ້ອງ;
3. ທວງຖາມ ຫຼື ຮ້ອງຟ້ອງ ຕໍ່ອົງການທີ່ກ່ຽວຂ້ອງ ເມື່ອບໍ່ໄດ້ຮັບຄວາມເປັນທໍາ ຈາກການຊື້ສິນຄ້າ ຫຼື ການບໍລິການ;
4. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຜູ້ໃຊ້ບໍລິການ ມີພັນທະ ດັ່ງນີ້:**

1. ຈ່າຍຄ່າສິນຄ້າ ຫຼື ການບໍລິການ ທີ່ຕົນເອງນໍາໃຊ້ ຕາມກົດໝາຍ ແລະ ລະບຽບການ;
2. ນໍາໃຊ້ສິນຄ້າ ຫຼື ບໍລິການ ຢ່າງຖືກຕ້ອງ ແລະ ປອດໄພ;
3. ສະໜອງຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຕໍ່ອົງການທີ່ກ່ຽວຂ້ອງ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 21 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ກີດກັ້ນ, ຂັດຂວາງ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ;
3. ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນການ ລະເມີດຂໍ້ຫ້າມ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

### ມາດຕາ 22 ຂໍ້ຫ້າມສຳລັບ ຜູ້ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ

ຫ້າມຜູ້ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ມີພຶດຕິກຳ ດັ່ງນີ້:

1. ຂາຍ, ໂອນ, ໃຫ້ເຊົ່າ ຫຼື ໃຫ້ຢືມ ໃບອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີ ການ ສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສະໜອງ, ສຳເນົາ, ນຳໃຊ້, ດັດແປງ, ທຳລາຍ ຫຼື ເປີດເຜີຍ ຂໍ້ມູນ ບຸກຄົນ, ນິຕິບຸກຄົນ ຫຼື ການ ຈັດຕັ້ງ ທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໃຫ້ບໍລິການ ຂໍ້ມູນ ຂ່າວສານ ທີ່ມີລັກສະນະ ລາມົກອະນາຈານ, ບິດເບືອນ, ສົ່ງເສີມການກໍ່ການ ຮ້າຍ ຫຼື ຕໍ່ຕ້ານພັກ-ລັດ;
4. ນຳເຂົ້າ, ຈຳໜ່າຍ ຫຼື ໃຫ້ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ມາດ ຕະຖານ;
5. ນຳເຂົ້າ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບການຢັ້ງຢືນຈາກພາກ ສ່ວນທີ່ກ່ຽວຂ້ອງ;
6. ຈຳໜ່າຍ ອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ບໍ່ຜ່ານການຢັ້ງຢືນການນຳເຂົ້າ;
7. ໃຫ້ບໍລິການ ຫຼື ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເກີນປະ ເພດການບໍລິການ ທີ່ໄດ້ຮັບອະນຸຍາດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 23 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ເຂົ້າຫາ, ທຳລາຍ, ດັດແປງ, ປອມແປງ, ສະໜອງ, ນຳໃຊ້ ຫຼື ເຜີຍແຜ່ຂໍ້ມູນ ຂອງບຸກຄົນ, ນິຕິ ບຸກຄົນ, ຜູ້ດຳເນີນທຸລະກິດ ຫຼື ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ກໍ່ໃຫ້ເກີດຄວາມເສຍ ຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ກົດໜ່ວງ, ຖ່ວງດຶງ ການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ອົງການຄຸ້ມຄອງ

**ມາດຕາ 24 ອົງການຄຸ້ມຄອງ**

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງ ວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ ໂດຍມອບໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງ ວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ປະກອບດ້ວຍ:

1. ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ;
2. ຫ້ອງການ ຫຼື ໜ່ວຍງານ ເຕັກໂນໂລຊີ ແລະ ການສື່ສານ ເມືອງ;
3. ຂະແໜງການອຸດສາຫະກຳ ແລະ ການຄ້າ;
4. ຂະແໜງການສ່ວຍສາອາກອນ;
5. ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
6. ຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ;
2. ສ້າງ, ຍົກລະດັບ, ພັດທະນາບຸກຄະລາກອນ ໃນວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
3. ຄົ້ນຄວ້າ ອອກ, ຕໍ່, ໂຈະ, ປ່ຽນແປງ, ຖອນ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
4. ຊຸກຍູ້, ຕິດຕາມ, ກວດກາ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
5. ເກັບຄ່າທຳນຽມ ແລະ ຄ່າບໍລິການ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າງົບປະມານຂອງແຂວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ພິຈາລະນາ, ແກ້ໄຂບັນຫາ ແລະ ຄຳສະເໜີ ກ່ຽວກັບການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
7. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
8. ເກັບກຳສະຖິຕິ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ອົງການປົກຄອງແຂວງ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການ ຫຼື ໜ່ວຍງານ ເຕັກໂນໂລຊີ ແລະ ການສື່ສານ ເມືອງ**

ຫ້ອງການ ຫຼື ໜ່ວຍງານ ເຕັກໂນໂລຊີ ແລະ ການສື່ສານ ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ;

2. ເຂົ້າຮ່ວມຝຶກອົບຮົມ ຍົກລະດັບທາງດ້ານວິຊາການ ໃນວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ;

3. ອອກ, ຕໍ່, ໂຈະ, ປ່ຽນແປງ, ຖອນ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຕາມການມອບໝາຍ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ແຕ່ລະໄລຍະ;

4. ຊຸກຍູ້, ຕິດຕາມ, ກວດກາ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ພາຍໃນເມືອງ;

5. ເກັບຄ່າທຳນຽມ ແລະ ຄ່າບໍລິການ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເຂົ້າງົບປະມານຂອງເມືອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; .

6. ຮັບຄຳສະເໜີ ແລະ ບັນຫາ ທີ່ກ່ຽວຂ້ອງກັບ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ ຢູ່ພາຍໃນເມືອງ ເພື່ອສະເໜີໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຄົ້ນຄວ້າ, ພິຈາລະນາ;

7. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ຂັ້ນເມືອງ;

8. ເກັບກຳສະຖິຕິ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ຢູ່ພາຍໃນ ເມືອງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ອົງການປົກຄອງເມືອງ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ ໃຫ້ວິສາຫະກິດ ທີ່ມາແຈ້ງຂຶ້ນທະບຽນວິສາຫະກິດ;

2. ສຳເນົາໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ ໃຫ້ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ພາຍຫຼັງໄດ້ອອກໃບທະບຽນວິສາຫະກິດ ໃຫ້ວິສາຫະກິດ ທີ່ມີຈຸດປະສົງ ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ປະສານສົມທົບກັບ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບຂັ້ນຕອນການຂຶ້ນທະບຽນວິສາຫະກິດ ແລະ ການຂໍອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

4. ລຶບລ້າງ ຫຼື ປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ພາຍຫຼັງ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄດ້ແຈ້ງ ແລະ ຢັ້ງຢືນວ່າ ປະເພດການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຂະແໜງການສ່ວຍສາອາກອນ**

ຂະແໜງການສ່ວຍສາອາກອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ ໃຫ້ວິສາຫະກິດ ທີ່ມາແຈ້ງເສຍອາກອນ;

2. ແຈ້ງໃຫ້ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເມື່ອເຫັນວ່າ ວິສາຫະກິດ ທີ່ມາແຈ້ງເສຍອາກອນ ຍັງບໍ່ມີໃບອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ປະສານສົມທົບກັບ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ການແຈ້ງເສຍອາກອນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ ໃຫ້ວິສາຫະກິດ ທີ່ມາຂຶ້ນທະບຽນປ້າຍ;

2. ກວດກາເນື້ອໃນປ້າຍ ໃຫ້ສອດຄ່ອງກັບປະເພດການດຳເນີນທຸລະກິດ;

6. ຍົກເລີກ, ລຶບລ້າງ ຫຼື ປ່ຽນແປງເນື້ອໃນປ້າຍ ພາຍຫຼັງ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄດ້ແຈ້ງ ແລະ ຢັ້ງຢືນວ່າ ເນື້ອໃນປ້າຍ ບໍ່ສອດຄ່ອງກັບ ປະເພດການດຳເນີນທຸລະກິດ ບໍລິການ ດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ປະສານສົມທົບກັບ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການ ທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຂັ້ນຕອນ ການຂໍອະນຸຍາດດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ການຂຶ້ນທະບຽນປ້າຍ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບແຈ້ງຄວາມຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນກໍລະນີ ມີການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ;

2. ສືບສວນ-ສອບສວນ ແລະ ດຳເນີນຄະດີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3. ປະສານສົມທົບກັບ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເພື່ອແກ້ໄຂບັນຫາການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການກວດກາ

**ມາດຕາ 31 ອົງການກວດກາ**

ອົງການກວດກາ ວຽກງານການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ປະກອບດ້ວຍ: ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

**ມາດຕາ 32 ອົງການກວດກາພາຍໃນ**

ອົງການກວດກາພາຍໃນ ປະກອບມີ:

1. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ;
2. ຫ້ອງການ ຫຼື ໜ່ວຍງານເຕັກໂນໂລຊີ ແລະ ການສື່ສານ ເມືອງ;
3. ຂະແໜງການອຸດສາຫະກຳ ແລະ ການຄ້າ;
4. ຂະແໜງການສ່ວຍສາອາກອນ;

5. ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
6. ຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 33 ອົງການກວດກາພາຍນອກ**

ອົງການກວດກາພາຍນອກ ປະກອບມີ:

1. ສະພາປະຊາຊົນແຂວງ;
2. ອົງການກວດກາລັດແຂວງ, ອົງການກວດກາລັດເມືອງ;
3. ອົງການກວດສອບ ປະຈຳພາກເໜືອ 2;
4. ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ.

**ມາດຕາ 34 ຮູບການກວດກາ**

ຮູບການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາແບບປົກກະຕິ ຊຶ່ງແມ່ນ ການກວດກາ ຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຂອງອົງການກວດກາແຕ່ລະຂັ້ນ ໂດຍມີການແຈ້ງ ໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

2. ການກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ຊຶ່ງແມ່ນ ການກວດກາຕາມ ມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການລັດ, ຫົວໜ້າອົງການກວດກາລັດແຕ່ລະຂັ້ນ ແລະ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍມີການແຈ້ງໃຫ້ເປົ້າຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາ ຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

**ມາດຕາ 35 ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບກ່ຽວກັບວຽກງານການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

2. ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງອົງການຄຸ້ມຄອງ ວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

3. ການເຄື່ອນໄຫວ ຂອງເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານ ການດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ;

4. ການເຄື່ອນໄຫວ ຂອງຜູ້ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມລະບຽບການ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດ ມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 38 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ຜູ້ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ລະເມີດຂໍ້ຫ້າມກົດໝາຍສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10.000.000 ກີບ;

2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5.000.000 ກີບ;

3. ໃຫ້ບໍລິການ ຫຼື ດຳເນີນທຸລະກິດ ບໍລິການດ້ານເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ເກີນປະເພດການບໍລິການ ທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5.000.000 ກີບ;

4. ຈຳໜ່າຍອຸປະກອນເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ໂດຍບໍ່ຜ່ານການຢັ້ງຢືນການນຳເຂົ້າ ຈະຖືກປັບໃໝ 10.000.000 ກີບ;

5. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອຳຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ອົງການກວດກາ ຈະຖືກປັບໃໝ 5.000.000 ກີບ.

6. ໂຄສະນາ ຫຼື ໃຫ້ບໍລິການ ບໍ່ກົງກັບຄວາມເປັນຈິງ ຈະຖືກປັບໃໝ 5.000.000 ກີບ;

7. ໂຄສະນາ ໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ໃຫ້ຜູ້ດຳເນີນທຸລະກິດອື່ນ ຈະຖືກປັບໃໝ 5.000.000 ກີບ;

8. ບໍ່ຕໍ່ໃບອະນຸຍາດ ພາຍໃນ ສາມສິບ ວັນ ກ່ອນໃບອະນຸຍາດຈະໝົດອາຍຸ ຈະຖືກປັບໃໝ 500.000 ກີບ.

**ມາດຕາ 39 ມາດຕະການໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ອົງການກວດກາ ຈະໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດ ໃນກໍລະນີ ດັ່ງນີ້:

1. ບໍ່ມີການເຄື່ອນໄຫວທຸລະກິດ ຫຼັງຈາກໄດ້ຮັບໃບອະນຸຍາດແລ້ວ ພາຍໃນ ເວລາ ຫົກສິບ ວັນ;

2. ໃຫ້ບໍລິການ ຫຼື ດຳເນີນທຸລະກິດ ເກີນປະເພດ ທີ່ໄດ້ຮັບອະນຸຍາດ;

3. ປອມແປງ, ເຊື່ອງອຳ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກຳນົດ ຂອງອົງການຄຸ້ມຄອງ ແລະ ອົງການກວດກາ;

4. ມີພຶດຕິກຳ ຫຼື ໃຊ້ວາຈາບໍ່ສຸພາບ, ທ້າທາຍ, ໝິ່ນປະໝາດ ແລະ ສ້າງຄວາມເສຍຫາຍ ໃຫ້ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ;

5. ບໍ່ປະຕິບັດ ພັນທະ, ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດຕາມກົດໝາຍ ແລະ ລະບຽບການ;

6. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;

7. ຖືກໂຈະໃບອະນຸຍາດແລ້ວ ແຕ່ບໍ່ປະຕິບັດຕາມແຈ້ງການ ຂອງອົງການຄຸ້ມຄອງ ແລະ ກວດກາ ພາຍໃນໄລຍະ ເວລາ ຫົກສິບ ວັນ ຈະຖືກຖອນ ຫຼື ຍົກເລີກໃບອະນຸຍາດ;

8. ຖືກປັບໃໝ ໃນມາດຕາ 38 ຈຳນວນ ສອງ ຄັ້ງ;

9. ລະເມີດກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

ພາຍຫຼັງໄດ້ຮັບເອກະສານສັ່ງໂຈະ, ຖອນ ຫຼື ຍົກເລີກ ຜູ້ດຳເນີນກິດຈະການຕ້ອງຢຸດຕິການເຄື່ອນໄຫວທັນທີ ພ້ອມທັງ ຊຳລະ ສະສາງ ໜີ້ສິນ ແລະ ແກ້ໄຂຂໍ້ລະເມີດ ທີ່ເກີດຂຶ້ນໃຫ້ສຳເລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກເຕັກໂນໂລຊີ ແລະ ແລະ ການສື່ສານ ແຂວງ, ຫ້ອງການ ຫຼື ໜ່ວຍງານເຕັກໂນໂລຊີ ແລະ ການສື່ສານ ເມືອງ ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ;

ພະແນກການ, ອົງການລັດທຽບເທົ່າ ຂັ້ນແຂວງ, ຂັ້ນເມືອງ, ອົງການຈັດຕັ້ງ ທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ເຈົ້າແຂວງ**

ບຸນຄົງ ຫຼ້າຈຽມພອນ